# ການກ້າວເຂົ້າສູ່ ລະບົບ ນິເວດ ກະສິກຳ ຢູ່ພາກໃຕ້ ແຂວງໄຊຍະບູລີ ສ.ປ.ປ ລາວ

## *ການປູກພືດໂດຍກົງຜ່ານພືດຄຸມດິນ*

Tivet, F; Tran Quoc, H; Khamxaykhay, C; Chantharath, B; Panyasiri, K; Julien, P; Seguy, L



ມຸມໜຶ່ງ ຂອງທັດສະນີຍະພາບ ຢູ່ພາກໃຕ້ ແຂວງໄຊຍະບູລີ

### ບາງຄຸນລັກຊະນະທາງດ້ານຮູບຮ່າງພື້ນທີ່,ເສດຖະກິດ ແລະ ກະສິກຳ ຢູ່ພາກໃຕ້ ແຂວງ ໄຊຍະບູລີ

ປະລິມານນ້ຳຝົນສະເລ່ຍ 1200 ມີລີແມັດຕໍ່ປີ$^{-1}$, ມີໄລຍະ ທີ່ແຫ້ງແລ້ງ ຢູ່ໃນທ້າຍເດືອນ ມິຖຸນາ ຫາ ຕົ້ນເດືອນ ສິງຫາ.

ການພັດທະນາ ທີ່ສຸມໃສ່ ສະເພາະແຕ່ ວຽກງານ ກະສິກຳ ແມ່ນຍ້ອນເງື່ອນໄຂ ທາງດ້ານ ການ ຕະຫຼາດ ທ້ອງຖິ່ນ ແລະ ຄວາມ ອາດສາມາດ ທາງດ້ານ ການເງິນ ຂອງ ຜູ້ຮັບເໝົາທ້ອງຖິ່ນ.

ບັນດາພືດໄຮ່ ທີ່ສຳຄັນມີ : ເຂົ້າ, ສາລີ, ຖົ່ວແດງ, ຖົ່ວດິນ, ໝາກເດືອຍ ແລະ ໝາກງາ.

ແຜນການຈັດສັນທີ່ດິນ ໄດ້ເລີ້ມຕົ້ນປະຕິບັດໃນປີ 1996. ຖືວ່າແມ່ນ ວຽກງານ ກະສິກຳ ທີ່ແທດເໝາະ ຍ້ອນ ບໍ່ມີ ການເຮັດໄຮ່ໝູນວຽນ ແລະ ຍ້ອນ ໄລຍະ ການປະດິນໃຫ້ເປັນປ່າເລົ່າ ນັ້ນແມ່ນ ຢູ່ໃນ ຂອບເຂດ ຈຳກັດ.

### ຜົນກະທົບ ຕໍ່ສະພາບແວດລ້ອມ ຈາກລະບົບການຜະລິດ :

ວິທີການ ຄຸ້ມຄອງດິນ ແມ່ນອີງໃສ່ ການໄຖດິນ ດ້ວຍລົດຕຣັກເຕີ ຢູ່ໃນ ພື້ນທີ່ ຄ້ອຍຊັນ ແລະ ດ້ວຍ ການ ນຳໃຊ້ ຢາຂ້າຫຍ້າ ກ່ອນປູກ. ການເຊາະເຈື່ອນ ຂອງດິນ,ເສັ້ນທາງ ແລະ ໂຄງລ່າງ ພື້ນຖານ ພື້ນທີ່ກະສິກຳ ຢູ່ທາງເບື້ອງລຸ່ມ ຖືກທຳລາຍ, ເກີດມີ ມົນລະພິດ ຈາກ ການນຳໃຊ້ ຢາ ປາບ ສັດຕູພືດ ແລະ ການປະລະ ພື້ນທີ່ປູກຝັງ ແມ່ນສິ່ງ ທີ່ສະແດງ ໃຫ້ເຫັນ ຢ່າງຈະແຈ້ງ ເຖິງ ຂີດຈຳກັດ ຂອງລະບົບການປູກຝັງ ເຫຼົ່ານີ້.



ການໄຖໃນພື້ນທີ່ຄ້ອຍຊັນ ແລະ ການເຊາະເຈື່ອນຂອງດິນ

## ການສ້າງ ລະບົບ ການປູກພືດໂດຍກົງ ຜ່ານພືດ ຄຸມດິນ ໃຫ້ໄດ້ ມາດຖານ



ການປູກໝາກງາຜ່ານເສດເຟືອງເຄືອຖົ່ວແດງ.

ຂັ້ນຕອນ ທຳອິດ ແມ່ນອີງໃສ່ ການນຳໃຊ້ ເສດພືດ ຂອງປີຜ່ານມາ (ເຂົ້າ- ຖົ່ວ ຫຼື ໝາກເດືອຍ). ລະບົບ ດັ່ງກ່າວນີ້ ຈະຊ່ວຍເປັນການ :

- ຫຼຸດຜ່ອນ ການແຜ່ ຂະຫຍາຍ ຂອງຫຍ້າ ທີ່ບໍ່ເປັນປະໂຫຍດ ແລະ ການເຊາະເຈື່ອນ ຂອງໜ້າດິນ;
- ເພີ່ມ ຄວາມອຸດົມສົມບູນ ໃຫ້ແກ່ດິນ ແລະ ສິ່ງທີ່ມີ ຊີວິດ ຢູ່ໃນດິນ;
- ຫຼຸດຜ່ອນ ມົນລະພິດ ດ້ວຍການ ກັກຕຸນ ຢາປາບສັດຕູພືດ ໄວ້ຢູ່ໃນພືດຄຸມດິນ.

ຂັ້ນຕອນ ທີສອງ ແມ່ນ ອີງໃສ່ ການປະສົມ ປະສານ ລະຫວ່າງ ລະບົບການປູກຝັງ ແລະ ລະບົບ ການລ້ຽງສັດ. ສອງ ລະບົບນີ້ ແມ່ນສາມາດ ພັດທະນາ ໄປຄຽງຄູ່ ກັນໄດ້ :

- ການໝູນວຽນກັນ ລະຫວ່າງ ການຜະລິດ ພືດໃຫ້ເມັດ (ສາລີ, ໝາກເດືອຍ) ແລະ ການຜະລິດ ພືດອາຫານສັດ (2 ຫາ 3 ປີ). ແນວພັນ ພືດອາຫານສັດ ສາມາດ ປູກສັບຫວ່າງ ກັບພືດຫຼັກໄດ້;
- ການຜະລິດ ພືດໃຫ້ເມັດ ແມ່ນອີງໃສ່ ການປູກ ຢ່າງຕໍ່ເນື່ອງ. ປູກພືດຫຼັກ (ຖົ່ວດິນ, ໝາກງາ) ຕິດຕາມດ້ວຍ ການ ປູກພືດ ອາຫານສັດນ້ອຍ (ເຂົ້າຟ່າງ, ເອເລີຊີນ).




*ຫຼັງຈາກໝາກເດືອຍແຕກງອກຂຶ້ນໄດ້ 30 ວັນແລ້ວ ປູກຫຍ້າ B. ruziziensis ສັບຕາມຫວ່າງແຖວ*



ທົ່ງຫຍ້າ ຣູຊີ



ການຜະລິດເຂົ້າຟ້າງສຳລັບເປັນອາຫານສັດນ້ອຍ



National Program of Agroecology

PO Box 811, MAF-NAFRI, PDR Lao. Emails: naep@yahoo.com, ciradca@laotel.com. Tel: 021.77.00.93